MEKONG WETLANDS BIODIVERSITY
USE WISELY

## *<u>ແຂ່ງຂັນກິລາບານເຕາະ, ສາຍພາບວີດີໂອກ່ຽວກັບກິດຈະກຳອານຸລັກຊີວະນາໆພັນ ແລະ ຫຼີ້ນເກມຢ່າງສະນຸກໜານເພື່ອສະເຫຼີມສະຫຼອງວັນສິ່ງແວດສອ້ມໂລກ</u>*

ພິທີດັ່ງກ່າວແມ່ນໄດ້ເປີດຂື້ນໃນວັນທີ: 01/06/05 ທີ່ເມືອງໄຊເສດຖາ, ແຂວງອັດຕະປື, ສປປ ລາວ ຢ່າງເປັນທາງການ ໂດຍ ທ່ານ ສີໃນ ມຽງລາວັນ ຄະນະປະຈຳພັກແຂວງ, ທັງເປັນຫົວໜ້າຄະນະຊີ້ນຳໂຄງການ MWBP, ພອ້ມທັງ ທ່ານ ວັດສະດີ ເຈົ້າເມືອງໆໄຊເສດຖາ ແລະ ທ່ານ ນາວາລັດ ຫົວໜ້າຫ້ອງການ ວິທະຍາສາດ ແລະ ເທັກໂນໂລຊີ ກໍ່ໃຫ້ກຽດເຂົ້າຮວ່ມເປີດພິທີດັ່ງກ່າວ, ເພື່ອເປັນການສະເຫຼີມສະຫຼອງວັນເດັກນອ້ຍສາກົນ ແລະ ວັນປູກຕົ້ນໄມ້ (ວັນສິ່ງແວດລອ້ມໂລກວັນທີ: 05/06/05 ຂອງທຸກໆປີ) ແລະ ຄັ້ງນີ້ໄດ້ມີຈຳນວນຄົນເຂົ້າຮວ່ມເຖິງ 200 ກວ່າຄົນມາຈາກຫຼາຍພາກສ່ວນ ແລະ ຄະແໜງການຕ່າງໆ ອວ້ມຂາງແຂວງ. ນອກຈາກນີ້ຍັງມີການແຂ່ງຂັນ ກິລາບານເຕາະ, ຫຼີ້ນເກມ ແລະ ກິລາອື່ນໆ ອີກຫຼາຍປະເພດ ເພື່ອສົ່ງເສີມອານຸລັກ ວັນສິ່ງແວດລວ້ມໂລກ ແລະ ແຜນງານຂອງໂຄງການຄຸ້ມຄອງ ແລະ ນຳໃຊ້ຊີວະນາໆພັນແບບຍືນຍົງ ເຂດດິນບໍລິເວນນ້ຳ ໃນເຂດອ່າງແມ່ນ້ຳຂອງຕອນລຸ່ມເຊີ່ງເຂດຂອງໂຄງ ການຕັ້ງຢູ່ແຂວງ ອັດຕະປື, ສປປ ລາວ.

ວັນສີງແວດລວ້ມໂລກນີ້ແມ່ນມີຄວາມໝາຍຄວາມສຳຄັນໃນການພົບປະສ້າງສັນຂອງກຸ່ມຄົນມາຈາກຫຼາຍພາກສວ່ນ ແລະ ຂະແໜງການ. ນອກຈາກການສະເຫຼີມສະຫຼອງໃຫ້ມີຄວາມມວ່ນຊື່ນແລ້ວຍັງເປັນການສົ່ງເສີມ ຄຸນຄ່າຄວາມສຳຄັນຂອງວັນສິ່ງແວດລອ້ມ ແລະ ດິນບໍລິເວນນ້ຳອີກດວ້ຍ”, ທ່ານ ນາວາລັດ ຫົວໜ້າຫອ້ງການ ວິທະຍາສາດ ແລະ ເທັກໂນໂລຊີ ແຂວງອັດຕະປືໄດ້ກ່າວໃນພະທີ. ກິດຈະກຳດ້ານການສຶກສາກໍ່ ໄດ້ມີການຕອບຄຳຖາມ ແລະ ສາຍພາບວີດີໂອໃຫ້ຄວາມຮູ້ດ້ານການສຶກສາສີງແວດລວ້ມ, ແລະ ກິດຈະກຳອື່ນໆເຊັ່ນ: ແຂ່ງຂັນແລ່ນເປົາ, ດຶ່ງເຊືອກ, ປູກຕົ້ນໄມ້ ແລະ ເກັບຂີ້ເຫຍື້ອອານະໄມຕົວເມືອງ.

ນອກຈາກນັ້ນ, ບັນດານັກສຳມະນາກອນຈາກກອງປະຊຸມຝຶກອົບຮົມ ການປະເມີນ ຜົນກະທົບ ຕໍ່ສິ່ງແວດລວ້ມ ຄັ້ງທີ່ II ຊື່ງໄດ້ຈັດໃນວັນທີ: 30/05/05 ເຖິງ 03/06/05ໂດຍໂຄງການ MWBP ກໍ່ໄດ້ມີໜ້າເຂົ້າຮວ່ມເປັນຈຳນວນ 30 ທ່ານ ມາຈາກ 15 ຂະແໜງການ. ກອງປະຊຸມຝຶກອົບຮົມຄັ້ງນີ້ແມ່ນໄດ້ລົ່ງເລິກກ່ຽວກັບວຽກງານ ການປະເມີນ ຜົນກະທົບ ຕໍ່ສິ່ງແວດລວ້ມ ຂອງໂຄງການເຄືອນໄຟຟ້າ. ບັນດານັກສຳມະນາກອນດັ່ງກ່າວໄດ້ຮຽນຮູ້ວິທີການຂຽນບົນປະເມີນ ຜົນກະທົບຕໍ່ສິ່ງແວດລອ້ມ, ຈັດເປັນກຸ່ມ ແລະ ໄປຢ່ຽມຢາມເຂດໂຄງການ ແລະ ພວ້ມກັນນັ້ນກໍ່ໄດ້ເຂົ້າຮວ່ມສະເຫຼີມສະຫຼອງວັນສິ່ງແວດລອ້ມໂລກ ແລະ ແຂ່ງຂັນກິລາບານເຕາະຢ່າງເປັນຂະບວນຟົດຟື້ນ.

A JOINT UNDP - IUCN - MRC - GEF PROGRAMME

UNDP

IUCN
The World Conservation Union

MRC

“ກອງປະຊຸມ ຝຶກອົບຮົມ ຜົນກະທົບ ຕໍ່ສິ່ງແວດລ້ອມ ໄດ້ຈັດຂື້ນໃນພອ້ມດຽວກັນກັບວັນສະເຫຼີມສະຫຼອງ ວັນສິ່ງແວດລອ້ມໂລກເຊີ່ງໄດ້ເຮັດໃຫ້ບັນດາພະນັກງານ ແລະ ວິຊາການນຈາກບັນດາພະແນກການຕ່າງໆ ອວ້ມຂ້າງແຂວງໄດ້ມີໂອກາດເຂົ້າຮວ່ມກິດຈະກາໍ ແລະ ສະເຫຼີມສະຫຼອງວັນສິ່ງແວດລວ້ມໂລກຮວ່ມກັບຊຸມຊົນ” ທ່ານມາກ ເດີບິວ ທີປຶກສາດ້ານວິຊາການໂຄງການ MWBP ແຂວງອັດຕະປື ໄດ້ກ່າວໃນພິທີຊຸມໜຸມ. “ການຈັດຕັ້ງວຽກງານຂອງ ໂຄງການ MWBP ແມ່ນໄດ້ດາໍເນີນໄປຢ່າງລາບລື້ນໂດຍສະເພາະວຽກງານທີພົວພັນກັບໂຄງການເຊີ່ງມີຫຼາຍພາກສວ່ນພາຍໃນແຂວງສົນໃຈ ແລະ ເຂົ້າມາມີສວ່ນຮວ່ມຢ່າງເປັນຂະບວນການ”.

ການສະເຫຼີມສະຫຼອງວັນສິ່ງແວດລອ້ມໂລກນີ້ຈັດຂື້ນໂດຍ ຫອ້ງການ ວິທະຍາສາດ ແລະ ເທັກໂນໂລຊີ ແຂວງອັດຕະປືເຊີ່ງໄດ້ຮັບການສະນັບສະໜູນຈາກໂຄງການ MWBP, ເປັນສວ່ນໜຶ່ງຂອງແຜນງານຂອງໂຄງການ MWBP ແຂວງອັດຕະປື, ຊື່ງໄດ້ຮັບຄວາມຮວ່ມມືຈາກ ຫອ້ງການ ວິທະຍາສາດ ແລະ ເທັກໂນໂລຊີ ແລະ ພະແນກການອື່ນໆທີ່ກຽວຂອ້ງ.